ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ເຂົ້າຮ່ວມພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2023 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ

ໃນວັນທີ 7 ທັນວາ 2023 ທີ່ຜ່ານມານີ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ໄດ້ເຂົ້າຮ່ວມ “ພິທີມອບ-ຮັບລາງວັນເປີດເຜີຍຂໍ້ມູນດີເດັ່ນ ແລະ ລາງວັນການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2023 ຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ” ຫຼື (LSX Disclosure and CG Award 2023).

ພິທີມອບ-ຮັບລາງວັນດັ່ງກ່າວແມ່ນເພື່ອສະຫຼຸບຜົນງານການຈັດຕັ້ງປະຕິບັດວຽກງານການເປີດເຜີຍຂໍ້ມູນ ແລະ ວຽກງານການປະເມີນການຈັດຕັ້ງປະຕິບັດການຄຸ້ມຄອງບໍລິຫານຂອງ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ປີ 2023 ພ້ອມທັງເພື່ອຊຸກຍູ້-ສົ່ງເສີມ ແລະ ຍົກລະດັບວຽກງານດັ່ງກ່າວຂອງບໍລິສັດຈົດທະບຽນໃຫ້ດີຍິ່ງຂຶ້ນກວ່າເກົ່າໃນຕໍ່ໜ້າ. ໃນປີ 2023 ນີ້ ບໍລິສັດ ສຸວັນນີ ໂຮມເຊັນເຕີ ແມ່ນໄດ້ລາງວັນຄື: **“ການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ, ການເປີດເຜີຍຂໍ້ມູນດີເດັ່ນປະເພດ I ແລະ ການຄຸ້ມຄອງບໍລິຫານດີເດັ່ນປະເພດ II”** ມອບໂດຍ ທ່ານສຸພັກ ຖິ່ນໄຊພອນ ຜູ້ອຳນວຍການໃຫຍ່ ຕລຊລ ແລະ ຕາງໜ້າ ບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ ຂຶ້ນຮັບລາງວັນໂດຍ ທ່ານ ພັນໂນ ລາ ສຸຄະບັນດິດ ຮອງຜູ້ອຳນວຍການໃຫຍ່ ແລະ ຜູ້ອຳນວຍການໃຫຍ່ຝ່າຍການເງິນ.




ພິທີມອບ ຮັບລາງວັນການເປີດເຜີຍຂໍ້ມູນດີເດັ່ນ
ແລະ ການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2023
ຂອງ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ
LSX Disclosure and Corporate Governance Award 2023
ສຸວັນນີ ໂຮມເຊັນເຕີ ໄດ້ຮັບລາງວັນ
ການເປີດເຜີຍຂໍ້ມູນແບບສະໝັກໃຈດີເດັ່ນ
WWW.SOUVANNY.LA
Call center
021-561111


ພິທີມອບ ຮັບລາງວັນການເປີດເຜີຍຂໍ້ມູນດີເດັ່ນ
ລະ ການຄຸ້ມຄອງບໍລິຫານດີເດັ່ນ ປະຈຳປີ 2023
ຂອງ ບໍລິສັດຈົດທະບຽນ ໃນຕະຫຼາດຫຼັກຊັບລາວ
Disclosure and Corporate Governance Award 2023
ສຸວັນນີ ໂຮມເຊັນເຕີ ໄດ້ຮັບລາງວັນ
ການຄຸ້ມຄອງບໍລິຫານດີເດັ່ນປະເພດ II
WWW.SOUVANNY.LA
Call center
021-561111